ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໂທລະສັບ: (856-21)520715, ແຟັກ:(856-21)256259
BAN VATTAINOYTHONG, SIKHOTTHABONG DISTRICT, VIENTIANE CAPITAL. TEL: (856-21)520715, FAX: (856-21)256259

ເລກທີ:...03..6.../ລອທ

ນະຄອນຫຼວງວຽງຈັນ,ວັນທີ...05 JUL 2022

ໜັງສືແຈ້ງການ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 01 ປະຈຳປີ 2022 ຄັ້ງວັນທີ 4/06/2022 ກ່ຽວກັບ ການລາອອກ ແລະ ການແຕ່ງຕັ້ງ ຜູ້ອຳນວຍການຄົນໃຫມ່.

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ມະຕິກອງປະຊຸມສະພາບໍລິຫານສະໄໝວິສາມັນ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຄັ້ງວັນທີ 01 2022 ເລກທີ 032 ລົງວັນທີ 4/06/2022

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຊາບວ່າ ມະຕິສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຄັ້ງວັນທີ 01/2022 ວັນທີ 4/06/2022 ກອງປະຊຸມໄດ້ຮັບຮອງການແຕ່ງຕັ້ງອຳນວຍການໃຫຍ່ ແລະ ສະມາຊິກກຳມະການສະພາບໍລິຫານຜູ້ໃຫມ່ ເພື່ອປ່ຽນແທນຜູ້ເກົ່າທີ່ລາອອກ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1. ມະຕິກອງປະຊຸມໄດ້ຮັບຮອງການລາອອກຈາກການເປັນສະມາຊິກກຳມະການສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ຂອງ ທ່ານ ອຸດົມ ແກ້ວທະວົງ.
2. ຮັບຮອງ ແລະ ແຕ່ງຕັ້ງທ່ານ ເສດ ພັດທະນະມາດ ເປັນອຳນວຍການໃຫຍ່ຄົນໃໝ່ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານງານຕໍ່ໄປ.
3. ຮັບຮອງ ແລະ ແຕ່ງຕັ້ງທ່ານ ທະນະເສດ ມາລະວັນໂນ ເປັນສະມາຊິກກຳມະການສະພາບໍລິຫານຄົນໃຫມ່ແທນສະມາຊິກທີ່ລາອອກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ

ຮຽນມາດ້ວຍຄວາມນັບຖື,
ຮອງປະທານສະພາບໍລິຫານ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ປອ. ນາງ ຄຳແພງ ພັດທະດາວົງ